LALCO
LAO ASEAN LEASING PUBLIC COMPANY

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
===== 000 =====

ເລກທີ 0916

ນະຄອນຫຼວງວຽງຈັນ, ວັນທີ: 16 ກັນຍາ 2024

ຮຽນ: ທ່ານ ທ່ານ ຫົວໜ້າ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ ຕະລາດຫຼັກຊັບລາວ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິສຳຄັນເພີ່ມເຕີມຂອງກອງປະຊຸມວິສາມັນສະພາບໍລິຫານ ຄັ້ງ...3./2024 ວັນທີ 16 ກັນຍາ 2024.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ, ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ, ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ເລກທີ 0909, ລົງວັນທີ 9 ກັນຍາ 2024.

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ (ລອຊ ຫຼື ບໍລິສັດ) ຂໍຖືເປັນກຽດລາຍງານມາຍັງທ່ານຊາບ ວ່າ ບໍລິສັດໄດ້ຈັດກອງປະຊຸມວິສາມັນຂອງສະພາບໍລິຫານເພີ່ມເຕີມ ຄັ້ງທີ...3./2024 ໃນວັນທີ 16 ກັນຍາ 2024 ເວລາ 16:00 ໂມງແລງ ທີ່ຫ້ອງການບໍລິສັດ ລອຊ ໂດຍການເປັນປະທານຂອງ ທ່ານນາງ Mrs. Yuki Scott ປະທານສະພາອຳນວຍການ ຂອງບໍລິສັດ ລອຊ ແລະ ມີສະມາຊິກສະພາຜູ້ບໍລິຫານເຂົ້າຮ່ວມ 04 ທ່ານ ພ້ອມດ້ວຍຜູ້ບໍລິຫານເຂົ້າຮ່ວມໃນນາມສັງເກດການ.

ກອງປະຊຸມປຶກສາຫາລືເພື່ອຊີ້ແຈ້ງ ແລະ ໄດ້ຕົກລົງບັນຫາສຳຄັນດັ່ງນີ້:

- ຊີ້ແຈງເຫດຜົນ ຄວາມລ້າຊ້າໃນການຈ່າຍເງິນປັນຜົນ: ບໍລິສັດ ລອຊ ບໍ່ສາມາດຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນໄດ້ທັນຕາມກຳນົດ ທີ **30 ສິງຫາ 2024** ທີ່ຜ່ານມາໄດ້ ເນື່ອງຈາກ ບໍລິສັດກຳລັງປະເຊີນກັບການຂາດສະພາບຄ່ອງຂອງສະກຸນເງິນກີບ ເຊິ່ງເຮັດໃຫ້ບໍລິສັດບໍ່ສາມາດຈ່າຍເງິນປັນຜົນຕາມກຳນົດການເດີມ.
- ກອງປະຊຸມໄດ້ຕົກລົງເຫັນດີ ແກ້ໄຂບັນຫານີ້ ໂດຍການກູ້ຢືມເງິນໃນສະກຸນເງິນກີບຈາກທະນາຄານທຸລະກິດພາຍໃນ ຊຶ່ງໃນປັດຈຸບັນ ກຳລັງລໍຖ້າການອະນຸມັດຈາກທະນາຄານກ່ຽວຂ້ອງ.
- ກອງປະຊຸມໄດ້ຕົກລົງເຫັນດີ ເລື່ອນການຈ່າຍເງິນປັນຜົນອອກໄປກ່ອນ ໂດຍປ່ຽນຈາກວັນທີ **30 ສິງຫາ 2024** ມາເປັນວັນທີ **30 ກັນຍາ 2024** ແລະ ຢືນຢັນວ່າຜູ້ຖືຮຸ້ນທີ່ມີລາຍຊື່ໃນປຶ້ມປິດບັນຊີຜູ້ຖືຮຸ້ນໃນວັນທີ 3 ພຶດສະພາ 2024 ແມ່ນຍັງມີສິດໃນການໄດ້ຮັບເງິນປັນຜົນຄືເກົ່າ.

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບ.

ດ້ວຍຄວາມນັບຖືຢ່າງສູງ ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່

ທ່ານ Yoshihito Oshima